ນ.ສ.ພ ລາຍວັນ
# ວຽງຈັນໃໝ່
VIENTIANE MAI NEWSPAPER
ສຳນັກງານເລກທີ 36, ຖະໜົນ ເຊດຖາທິລາດ, ຕູ້ ປ.ນ 989, ແຟັກ: 215989, ໂທ. 212623-4
www.vientianemai.net ; E-mail: news@vientianemai.net ປີທີ 39 ສະບັບທີ 128022
ວັນພະຫັດ 25 ມິຖຸນາ 2015
ຂຶ້ນ ໑໐ ຄ່ຳ ເດືອນແປດ ພສ ໒໕໕໘

## ບໍລິການກວດ ແລະ ປິ່ນປົວພະຍາດ ໃຫ້ປະຊາຊົນຢູ່ເຂດຫ່າງໄກສອກຫຼີກ



☆ ໂດຍໄດ້ຮັບທຶນສະໜັບສະໜູນຈາກມູນນິທິຟື້ນຟູສຸຂະພາບລາວ (LRF) ແລະ ທຶນສົມທົບປິ່ນປົວຕາຈາກມູນນິທິເຟຼດໂຮໂລ (FHF) ລວມມູນຄ່າ 9.659 ໂດລາສະຫະລັດ ຫຼື ປະມານ 78,33 ລ້ານກີບ ຄະນະແພດຈາກໂຮງໝໍແຂວງອຸດົມໄຊ ແລະ ໂຮງໝໍເມືອງງາ ນຳໂດຍທ່ານ ດຣ. Luc Janssens ປະທານມູນນິທິຟື້ນຟູສຸຂະພາບລາວ (LRF) ໄດ້ລົງເຄື່ອນໄຫວບໍລິການກວດ ແລະ ປິ່ນປົວພະຍາດແຂ້ວ ຫູ-ດັງ-ຄໍ ຕາ ແມ່ມານ ຜູ້ໃຫຍ່ ແລະ ເດັກນ້ອຍ ໂດຍບໍ່ໄດ້ເສຍຄ່າ ຢູ່ສຸກສາລາແສນຈອດ ເມືອງງາ ແຂວງອຸດົມໄຊ

ອ່ານຕໍ່ໜ້າ ໗

ປະຖົມ 258 ຄົນ ຈາກຈຳນວນຕົວເລກການປິ່ນປົວດັ່ງກ່າວ ເຫັນວ່າຍັງມີຄົນເຈັບຢ່າງຫຼວງຫຼາຍຢູ່ເຂດຊົນນະບົດທີ່ຕ້ອງການໆຊ່ວຍເຫຼືອ.

ໂອກາດນີ້ LRF ຍັງໄດ້ມອບອຸປະກອນການແພດທີ່ຈຳເປັນ ແລະ ຢາຈຳນວນໜຶ່ງ ຄື: Nebulizer Ultrasonic Doppler Oxymeter Small surgery set Delivery set ໃຫ້ສຸກສາລາແສນຈອດ ເພື່ອນຳໃຊ້ເຂົ້າໃນການບໍລິການກວດ-ປິ່ນປົວຄົນເຈັບ ແລະ ຍົກລະດັບການບໍລິການໃນສຸກສາລາໃຫ້ດີຂຶ້ນ.

**ບໍລິການກວດ...**

ໃນວັນທີ 19-20 ມິຖຸນາ 2015.

ການລົງເຄື່ອນໄຫວຄັ້ງນີ້ ເປັນຄັ້ງທີ 3 ທີ່ໄດ້ເຄື່ອນໄຫວຢູ່ບັນສຸກສາລາທີ່ຂຶ້ນກັບແຂວງອຸດົມໄຊ ແນໃສ່ຊ່ວຍກວດ ແລະ ປິ່ນປົວພະຍາດໃຫ້ແກ່ປະຊາຊົນຢູ່ເຂດຊົນນະບົດ ໂດຍບໍ່ໄດ້ຈຳແນກເພດ ອາຍຸ ຊົນເຜົ່າ ແລະ ສາສະໜາ ຜ່ານການລົງເຄື່ອນໄຫວສາມາດກວດ ແລະ ປິ່ນປົວໄດ້ 1.297 ຄົນ ຍິງ 831 ຄົນ ໃນນີ້ ພະຍາດແຂ້ວ 147 ຄົນ ພະຍາດຫູ-ດັງ-ຄໍ 82 ຄົນ ພະຍາດຕາ 167 ຄົນ ຜ່າຕັດແກ້ວຕາຂຸ່ນ 4 ຄົນ ຜ່າຕັດອື່ນໆ 2 ຄົນ ແລະ ແຈກຢາຍແວ່ນຕາ 56 ຄູ່ ກວດ ແມ່ມານ ດ້ວຍເຄື່ອງ Ultrasound Echography 23 ຄົນ ກວດພະຍາດທົ່ວໄປໃຫ້ແກ່ຜູ້ໃຫຍ່ ແລະ ປິ່ນປົວ 312 ຄົນ ກວດ ແລະ ປິ່ນປົວພະຍາດເດັກນ້ອຍ 308 ຄົນ ກວດຮັກສາສຸຂະພາບແຂ້ວ ໂດຍການຍ້ອມແຂ້ວດ້ວຍ Fluoride ສອນວິທີຖູແຂ້ວໃຫ້ແກ່ນັກຮຽນ

